# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

ບົດລາຍງານຂອງຜູ້ບໍລິຫານ ແລະ ບົດລາຍງານການເງິນທີ່ສອດຄ່ອງກັບ ກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ.

ນະວັນທີ 31 ທັນວາ 2011 ແລະ ສຳລັບໄລຍະວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

**ສາລະບານ**


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານການເງິນ | |
| ບົດລາຍງານຂອງຜູ້ກວດສອບເອກະລາດ | 3 - 4 |
| ໃບລາຍງານຜົນໄດ້ຮັບ | 5 |
| ໃບສະຫລຸບຊັບສິນບັດ | 6 -7 |
| ໃບລາຍງານການປ່ຽນແປງຂອງທຶນ | 8 |
| ໃບລາຍງານກະແສເງິນສົດ | 9 |
| ເອກະສານຊ້ອນທ້າຍບົດລາຍງານການເງິນ | 10 – 25 |

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

## ຂໍ້ມູນທົ່ວໄປ

**ທະນານຄານ**

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ (ໃນທີ່ນີ້ເອີ້ນວ່າ "ສາຂາ") ແມ່ນສາຂາໜຶ່ງຂອງທະນາຄານຈາກປະເທດຈີນ ທີ່ໄດ້ດຳເນີນທຸລະກິດຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 16/ທຫລ ເຊິ່ງໄດ້ຮັບອານຸຍາດຈາກທະນາຄານ ແຫ່ງ ສປປ ລາວ ("ທຫລ") ໂດຍມີຜົນສັກສິດນັບແຕ່ເດືອນ ພະຈິກ 2011 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບປັບປຸງຢູ່ໃນເດືອນ ກຸມພາ 2012.

ທຶນຈົດທະບຽນຂອງສາຂາເບື້ອງຕົ້ນແມ່ນ 30 ລ້ານໂດລາສະຫະລັດ ("ໂດລາສະຫະລັດ"). ທຶນຈົດທະບຽນທີ່ໄດ້ຖອກແລ້ວໃນ ວັນທີ 31 ທັນວາ 2011 ແມ່ນ 30 ລ້ານ ໂດລາສະຫະລັດ, ທຽບເທົ່າກັບ 239,970 ລ້ານ ກີບ.

ການເຄື່ອນໄຫວຕົ້ນຕໍຂອງສາຂາແມ່ນ ເພື່ອສະໜອງການບໍລິການດ້ານການທະນາຄານ ແລະ ດ້ານການເງິນທີ່ກວ້າງຂວາງຢູ່ໃນ ສປປ ລາວ.

ສາຂາຕັ້ງຢູ່ ຖະໜົນລ້ານຊ້າງ, ເຮືອນເລກທີ່ 12, ບ້ານ ຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີຈົນເຖິງມື້ອອກບົດລາຍງານສະບັບນີ້ ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ລູ ຈຸ້ນ | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 28 ພະຈິກ 2011 |

**ຕົວແທນທາງກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາໃນປີ ແລະ ນະມື້ທີ່ອອກບົດລາຍງານແມ່ນ ທ່ານ ລູ ຈຸ້ນ.

**ຜູ້ກວດສອບ**

ຜູ້ກວດສອບການເງິນຂອງສາຂາ ແມ່ນບໍລິສັດ ເອີນແອນຢັງລາວ ຈຳກັດ.

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

## ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ (“ສາຂາ”) ມີຄວາມຍິນດີນຳສະເໜີບົດລາຍງານການເງິນຂອງສາຂາ ສຳລັບໄລຍະວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011.

## ຄວາມຮັບຜິດຊອບຂອງ ຄະນະບໍລິຫານຕໍ່ກັບບົດລາຍງານການເງິນ

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມໃບລາຍງານຖານະການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດໃນປີໂດຍສອດຄ່ອງກັບກົດ ໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍທະນາຄານແຫ່ງສປປລາວ. ໃນການກະກຽມບົດລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍ ຢູ່ໃນບົດລາຍງານການເງິນ; ແລະ
- ກະກຽມບົດລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາ ຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າສາຂາຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານສາຂາ ຮັບປະກັນວ່າການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງທນາຄານຢ່າງເໝາະສົມໃຫ້ທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນຕ້ອງ ມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂອງສາຂາຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນີ້ໃນການກະກຽມ ບົດ ລາຍງານການເງິນ ສຳລັບສຳລັບໄລຍະວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011.

## ການຮັບຮອງບົດລາຍງານການເງິນ

ຄະນະບໍລິຫານມີຄຳເຫັນວ່າໃບລາຍງານການເງິນໄດ້ສະແດງຖານະທາງການເງິນ, ຜົນປະກອບການ ແລະ ກະແສເງິນສົດຂອງສາຂາ ນະວັນທີ 31 ທັນວາ 2011 ແລະ ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາວັນທີ 31 ທັນວາ 2011 ຢ່າງຖືກຕ້ອງ ແລະ ເໝາະສົມໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍສາຂາແຫ່ງ ສປປ ລາວ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

---

ທ່ານ ລູ ຈຸ້ນ<br>
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ<br>
29 ມີນາ 2013

ເລກທີອ້າງອີງ: 61031041/16060718

# ບົດລາຍງານຂອງຜູ້ກວດສອບເອກະລາດ

**ເຖິງ: ຄະນະບໍລິຫານ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບບົດລາຍງານຖານະການເງິນຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ (“ສາຂາ”), ເຊິ່ງປະກອບດ້ວຍ ໃບສະຫລຸບຊັບສິນບັດ ນະວັນທີ 31 ທັນວາ 2011, ໃບລາຍງານຜົນໄດ້ຮັບ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011, ແລະ ບົດສະຫລຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ເອກະສານຊ້ອນທ້າຍບົດລາຍງານການເງິນດັ່ງທີ່ກ່າວໄວ້ຢູ່ໜ້າ 5 ຫາ ໜ້າ 25.

***ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ***

ຄະນະບໍລິຫານສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີໃບລາຍງານການເງິນໃຫ້ຖືກຕ້ອງໂດຍສອດຄ່ອງກັບກົດໝາຍການບັນຊີ, ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ. ຄວາມຮັບຜິດຊອບລວມມີ: ການອອກແບບ, ການຈັດຕັ້ງປະຕິບັດ, ການດຳເນີນການຄວບຄຸມພາຍໃນທີ່ກ່ຽວຂ້ອງໃນການສ້າງ ແລະ ນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງເຊິ່ງປາດສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ; ເລືອກເຟັ້ນ ແລະ ນຳໃຊ້ນະໂຍບາຍການບັນຊີທີ່ແທດເໝາະ ແລະ ການຄາດຄະເນການບັນຊີທີ່ສົມເຫດຜົນໃນສະພາບການຕ່າງໆ.

***ຄວາມຮັບຜິດຊອບຂອງຜູ້ກວດສອບ***

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫລົ່ານີ້ ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນ. ມາດຕະຖານເຫລົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນແມ່ນ ປາດສະຈາກຂໍ້ຜິດພາດອັນໃຫຍ່ຫລວງ.

ການກວດສອບລວມມີກຳມະວິທີຕ່າງໆ ເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງ ຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ. ກຳມະວິທີການທີ່ນຳໃຊ້ໃນການກວດສອບ ແມ່ນຂຶ້ນກັບການວິນິໄສຂອງຜູ້ກວດສອບລວມເຖິງການປະເມີນລະດັບຄວາມສ່ຽງຂອງຂໍ້ຜິດພາດອັນໃຫ່ຍຫລວງຂອງບົດລາຍງານການເງິນບໍ່ວ່າຈະແມ່ນຍ້ອນການສໍ້ໂກງ ຫລື ຄວາມຜິດ ພາດຕ່າງໆ. ໃນການປະເມີນຄວາມສ່ຽງດັ່ງກ່າວ, ຜູ້ກວດສອບຈະພິຈາລະນາບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບ ການສ້າງ ແລະ ການນຳສະເໜີບົດລາຍງານການເງິນຂອງສາຂາ ເພື່ອອອກແບບກຳມະວິທີໃນການກວດສອບ ໃຫ້ແທດເໝາະ

ກັບສະພາບການຕ່າງໆແຕ່ບໍ່ແມ່ນ ເພື່ອຈຸດປະສົງໃນການອອກຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ. ການກວດສອບນີ້ຍັງລວມການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນໍາໃຊ້ຢູ່, ຄວາມສົມເຫດສົມ ຜົນຂອງການຄາດຄະເນທາງການບັນຊີທີ່ຄະນະບໍລິຫານວາງອອກ, ພ້ອມກັນນັ້ນກໍ່ຍັງປະເມີນພາບລວມຂອງການນໍາ ສະເໜີບົດລາຍງານການເງິນອີກດ້ວຍ.

ພວກຂ້າພະເຈົ້າ ເຊື່ອວ່າຫລັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

***ຄໍາເຫັນ***

ໃນຄໍາເຫັນຂອງພວກຂ້າພະເຈົ້າ, ບົດລາຍງານການເງິນໄດ້ສະແດງ ຖານະການເງິນຂອງສາຂາຖືກຕ້ອງ ຕາມພາບພົດຕົວຈິງ ນະວັນທີ 31 ທັນວາ 2011 ແລະ ຜົນປະກອບການ ແລະ ກະແສເງິນສົດຂອງສາຂາ ສໍາລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາວັນທີ 31 ທັນວາ 2011 ໂດຍສອດຄ່ອງກັບກົດໝາຍບັນຊີ ແລະ ກົດລະບຽບການບັນຊີອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ.

ນະຄອນຫລວງວຽງຈັນ, ສປປ ລາວ

29 ມີນາ 2013

## ໃບລາຍງານຜົນໄດ້ຮັບ

ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

| *ລຳດັບ* | *ລາຍການ* | *ເອກະສານ ຊ້ອນທ້າຍ* | *ສຳລັບໄລຍະວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011 ກີບ* |
|---|---|---|---|
| A. | **ລາຍຮັບ ແລະ ລາຍຈ່າຍການດຳເນີນງານ** | | |
| 1. | **ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | 3 | **17,523,457** |
| 1.1 | ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ລະຫວ່າງ ສາຂາ | | 17,523,457 |
| 2. | **ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | 3 | **(5,009,374)** |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນໃຫ້ລູກຄ້າ | | (5,009,374) |
| I. | **ລາຍຮັບດອກເບ້ຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນ** | | **12,514,083** |
| 9 | **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ** | 4 | **8,877,223** |
| 12 | **ກຳໄລ /(ຂາດທຶນ) ສຸດທິ ຈາກການຊື້ຂາຍ ເງິນຕາຕ່າງປະເທດ ແລະ ທອງຄຳ** | | **(256,634,648)** |
| II. | **ລາຍຮັບສຸດທິຈາກການດຳເນີນງານ** | | **(235,243,342)** |
| B | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | |
| 13 | **ລາຍຮັບຈາກການດຳເນີນງານອື່ນໆ** | | **998,994** |
| 14 | **ລາຍຈ່າຍຄ່າບໍລິຫານ** | | **(2,500,915,851)** |
| 14.1 | ເງິນເດືອນ ແລະ ອື່ນໆທີ່ກ່ຽວຂ້ອງກັບພະນັກງານ | 5 | (688,780,184) |
| 14.2 | ລາຍຈ່າຍບໍລິຫານອື່ນໆ | 6 | (1,812,135,667) |
| 15 | **ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ** | | **(103,888,080)** |
| 16 | **ລາຍຈ່າຍການດຳເນີນງານອື່ນໆ** | | **(35,550,343)** |
| III. | **ລວມຍອດກຳໄລກ່ອນອາກອນ** | | **(2,874,598,622)** |
| 18 | **ອາກອນກຳໄລພາຍໃນປີ** | 14 | **(1,423,478)** |
| IV. | **ຂາດທຶນຫລັງຫັກອາກອນ** | | **(2,876,022,100)** |

ທ່ານ ລູ ຈຸ້ນ
ຜູ້ອຳນວຍການ
ນະຄອນຫລວງວຽງຈັນ, ສປປ ລາວ
29 ມີນາ 2013

ທ່ານ ຈ່າງ ຕ້າຊຸ້ນ
ຫົວໜ້າພະແນກບັນຊີ

*ເອກະສານຊ້ອນບົດລາຍງານການເງິນຂໍ້ 1 ຫາ 18 ຂອງບົດລາຍງານການເງິນສະບັບນີ້*

ໃບສະຫລຸບຊັບສິນບັດ
ສຳລັບທ້າຍປີ ວັນທີ 31 ທັນວາ 2011

| *ລຳດັບ* | | *ເອກະ ສານ ຊ້ອນທ້າຍ* | *31 ທັນວາ 2011 ກີບ* |
|---|---|---|---|
| | **ຊັບສິນ** | | |
| **I** | **ເງິນສົດ ແລະ ເງິນຝາກກັບທະນາຄານກາງ "ທຫລ"** | | **156,332,958,082** |
| 1 | ເງິນສົດໃນກຳມື | 7 | 6,516,742,984 |
| 2 | ເງິນຝາກະແສລາຍວັນ | 8 | 149,816,215,098 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | **9** | **166,467,878,629** |
| 1 | ເງິນຝາກກະແສລາຍວັນ | | 166,467,878,629 |
| **VIII** | **ຊັບສິນບັດຄົງທີ່** | | **12,072,082,507** |
| | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | | 44,384,841 |
| 3 | ຊັບສິນບັດຄົງທີ່ມີຕົວຕົນ | 10 | 12,027,697,666 |
| **X** | **ຊັບສິນອື່ນໆ** | | **11,348,917,218** |
| 1 | ດອກເບ້ຍຄ້າງຮັບ | | 15,733,884 |
| 2 | ຊັບສິນອື່ນໆ | 11 | 11,333,183,334 |
| | **ລວມຊັບສິນ** | | **346,221,836,436** |
| | **ໜີ້ສິນ ແລະ ທຶນ** | | |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **12** | **107,916,900,009** |
| 1 | ເງິນຝາກກະແສລາວັນ ແລະ ເງິນຝາກປະຢັດ | | 36,785,395,804 |
| 2 | ເງິນຝາກມີກຳນົດ | | 845,464,200 |
| 3 | ໜີ້ຕ້ອງສົ່ງອື່ນໃຫ້ລູກຄ້າ | | 70,286,040,005 |
| **V** | **ໜີ້ສິນອື່ນໆ** | | **1,210,958,527** |
| 1 | ດອກເບ້ຍຄ້າງຈ່າຍ | | 5,001,267 |
| 2 | ອາກອນຄ້າງຈ່າຍ | | 39,376,594 |
| 3 | ໜີ້ຄ້າງຈ່າຍອື່ນໆ | 13 | 1,166,580,666 |
| | **ລວມໜີ້ສິນ** | | **109,127,858,536** |

ໃບສະຫຼຸບຊັບສິນບັດ (ຕໍ່)
ສຳລັບທ້າຍປີ ວັນທີ 31 ທັນວາ 2011

| | | | |
|---|---|---|---|
| **VI** | **ທຶນ ແລະ ຄັງແຮ** | | **237,093,977,900** |
| 1 | ທຶນທີ່ໄດ້ຖອກແລ້ວ | 15 | 239,970,000,000 |
| 7 | ຂາດທຶນສະສົມ | | (2,876,022,100) |
| | **ລວມທຶນ** | | **237,093,977,900** |
| | **ລວມໜີ້ສິນ ແລະ ທຶນ** | | **346,221,836,436** |

______________________________

ທ່ານ ລູ ຈຸ້ນ
ຜູ້ອຳນວຍການ
ນະຄອນຫລວງວຽງຈັນ, ສປປ ລາວ
29 ມີນາ 2013

______________________________

ທ່ານ ຈ່າງ ຕ້າຊຸ້ນ
ຫົວໜ້າພະແນກບັນຊີ

## ໃບລາຍງານການປ່ຽນແປງຂອງທຶນ

ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

| | *ທຶນຈົດທະບຽນທີ່ຖອກແລ້ວ*<br>*ລ້ານກີບ* | *ກຳໄລສະສົມ*<br>*ລ້ານກີບ* | *ລວມຍອດ*<br>*ລ້ານກີບ* |
|---|---|---|---|
| **ຍອດເຫລືອນະວັນທີ 25 ສິງຫາ 2011** | | | |
| ທຶນຈົດທະບຽນຖອກແລ້ວພາຍໃນປີ | 239,970,000,000 | - | 239,970,000,000 |
| ຂາດທຶນສຸດທິພາຍໃນປີ | - | (2,876,022,100) | (2,876,022,100) |
| **ຍອດເຫລືອນະວັນທີ 31 ທັນວາ 2011** | **239,970,000,000** | **(2,876,022,100)** | **237,093,977,900** |

ທ່ານ ລູ ຈຸ້ນ
ຜູ້ອຳນວຍການ
ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2013

ທ່ານ ຈ່າງ ຕ້າຊຸ້ນ
ຫົວໜ້າພະແນກບັນຊີ

*ເອກະສານຊ້ອນບົດລາຍງານການເງິນຂໍ້ 1 ຫາ 18 ຂອງບົດລາຍງານການເງິນສະບັບນີ້.*

## ໃບລາຍງານກະແສເງິນສົດ

ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

| | *ເອກະສານ ຊ້ອນທ້າຍ* | *ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011*<br>*ກີບ* |
|---|---|---|
| **ກຳໄລ/(ຂາດທຶນ)ສຸດທິ ຫລັງຫັກອາກອນ** | | **(2,876,022,100)** |
| *ດັດແກ້ສຳລັບ:* | | |
| ລາຍຈ່າຍອາກອນກຳໄລຄ້າງຈ່າຍ | 15 | 1,423,478 |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ | | 103,888,080 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ** | | **(2,770,710,542)** |
| (ເພີ່ມຂຶ້ນ)/ຫລຸດລົງຂອງຊັບສິນໃນການດຳເນີນງານ | | |
| ລາຍຮັບດອກເບ້ຍຄ້າງຮັບ | | (15,733,884) |
| ຊັບສິນອື່ນໆ | | (11,377,791,214) |
| (ເພີ່ມຂຶ້ນ)/ຫລຸດລົງຂອງໜີ້ສິນໃນການດຳເນີນງານ | | |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆຂອງ ລູກຄ້າ | 12 | 107,916,900,009 |
| ລາຍຈ່າຍດອກເບ້ຍຄ້າງຈ່າຍ | | 5,001,267 |
| ໜີ້ສິນອື່ນໆ | | 1,204,533,782 |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **94,962,199,418** |
| **ການເຄື່ອນໄຫວທາງດ້ານການລົງທຶນ** | | |
| ການຊື້ຊັບສິນບັດ ແລະ ອຸປະກອນ | 10 | (12,131,362,707) |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນການເຄື່ອນໄຫວທາງດ້ານການລົງທຶນ** | | **(12,131,362,707)** |
| **ການເຄື່ອນໄຫວທາງດ້ານການເງິນ** | | |
| ທຶນຈົດທະບຽນຖືກເພີ່ມພາຍໃນປີ | 15 | 239,970,000,000 |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນການເຄື່ອນໄຫວທາງດ້ານການເງິນ** | | **239,970,000,000** |
| **ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **322,800,836,711** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **-** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **16** | **322,800,836,711** |

ທ່ານ ລູ ຈຸ້ຽນ
ຜູ້ອຳນວຍການ
ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2013

ທ່ານ ຈ່າງ ຕ້າຊຸ້ຽນ
ຫົວໜ້າພະແນກບັນຊີ

*ເອກະສານຊ້ອນບົດລາຍງານການເງິນຂໍ້ 1 ຫາ 18 ຂອງບົດລາຍງານການເງິນສະບັບນີ້.*

**ເອກະສານຊ້ອນທ້າຍບົດລາຍງານການເງິນ**

ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ ("ຕໍ່ໄປນີ້ເອີ້ນວ່າສາຂາ") ແມ່ນສາຂາທະນາຄານອຸດສາຫະກຳ ແລະ ການຄ້າຈີນ ເຊິ່ງຖືກສ້າງຕັ້ງຂຶ້ນໃນ ສປປ ຈີນ.

*ການສ້າງຕັ້ງ ແລະ ການດຳເນີນງານ.*

ສາຂາດຳເນີນທຸລະກິດຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 16/ທຫລ ເຊິ່ງໄດ້ຮັບອານຸຍາດຈາກທະນາຄານ ແຫ່ງສປປ ລາວ ("ທຫລ") ໃນວັນທີ 25 ສິງຫາ 2011 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບປັບປຸງຢູ່ໃນເດືອນ ກຸມພາ 2012.

ການເຄື່ອນໄຫວຕົ້ນຕໍຂອງສາຂາແມ່ນ ການບໍລິການທາງດ້ານການທະນາຄານ ແລະ ການເງິນ ໃນ ສປປ ລາວ.

*ທຶນຈົດທະບຽນທີ່ຖອກແລ້ວ*

ທຶນຈົດທະບຽນຂອງສາຂາເບື້ອງຕົ້ນແມ່ນ 30 ລ້ານໂດລາສະຫະລັດ ("ໂດລາສະຫະລັດ"). ທຶນຈົດທະບຽນທີ່ໄດ້ຖອກແລ້ວ ໃນວັນທີ 31 ທັນວາ 2011 ແມ່ນ 30 ລ້ານ ໂດລາສະຫະລັດ, ທຽບເທົ່າກັບ 239,970 ລ້ານ ກີບ.

*ຄະນະບໍລິຫານ*

ສະມາຊິກຂອງຄະນະບໍລິຫານພາຍໃນປີຈົນເຖິງມື້ອອກບົດລາຍງານສະບັບນີ້ ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ລູ ຈ້ຽນ | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 28 ພະຈິກ 2011 |

*ທີ່ຕັ້ງງ*

ສາຂາຕັ້ງຢູ່ ຖະໜົນລ້ານຊ້າງ, ເຮືອນເລກທີ່ 12, ບ້ານ ຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫລວງວຽງ ຈັນ, ສປປ ລາວ.

*ພະນັກງານ*

ພະນັກງານຂອງສາຂາ ນະວັນທີ 31 ທັນວາ 2011 ມີ 19 ຄົນ.

**2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ**

ນະໂຍບາຍຫລັກການການບັນຊີທີ່ສຳຄັນ ທີ່ນຳໃຊ້ເຂົ້າໃນການກະກຽມເຮັດບົດລາຍງານການເງິນ ມີດັ່ງລຸ່ມນີ້:

***2.1. ບົດລາຍງານການປະຕິບັດຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆ ທີ່ກ່ຽວຂ້ອງທີ່ໄດ້ກຳນົດໃຊ້ໂດຍ ທະນາຄານແຫ່ງ ສປປ ລາວ***

ຄະນະບໍລິຫານຂອງສາຂາໄດ້ມີການກະກຽມບົດລາຍງານການເງິນ ໂດຍອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ກົດລະບຽບການບັນຊີຂອງສາຂາ ທີ່ໄດ້ກຳນົດໃຊ້ໂດຍທະນາຄານ ແຫ່ງ ສປປ ລາວ.

***2.2. ພື້ນຖານການກະກຽມ***

ສາຂາບັນທຶກບັນຊີເປັນເງິນກີບ ແລະ ໄດ້ກະກຽມບົດລາຍງານການເງິນເປັນຫົວໜ່ວຍລ້ານກີບ (“ລ້ານກີບ”) ໂດຍສອດຄ່ອງກັບດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ລົງວັນທີ 22 ມີນາ 2000 ວ່າດ້ວຍລະບົບການບັນຊີທີ່ນຳໃຊ້ສຳລັບທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນອື່ນໆ.

ບົດລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫລັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ,ໃບລາຍງານຜົນໄດ້ຮັບ,ໃບສະຫລຸບຊັບສົມບັດ, ໃບລາຍງານການປ່ຽນແປງຂອງທຶນ, ໃບລາຍງານກະແສເງິນສົດ ແລະ ເອກະສານຊ້ອນທ້າຍໃນບົດລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳ ລັບທ່ານທີ່ບໍ່ໄດ້ຮັບຮູ້ຫລັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ, ບົດລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫລັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

***2.3. ປີການບັນຊີ***

ປີການບັນຊີປີທຳອິດຂອງສາຂາ ແມ່ນເລີ່ມແຕ່ວັນທີ 25 ສິງຫາ 2011 ແລະ ສິ້ນສຸດວັນທີ 31 ທັນວາ 2011. ຫລັງຈາກນັ້ນ, ປີການບັນຊີຂອງສາຂາແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

***2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ***

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບໂດຍອີງຕາມຫລັກການບັນຊີແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບ ກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫລື ເມື່ອຄະນະບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນໄດ້ຮັບ ກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

**2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.5. ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ.***

ຄ່າທຳນຽມ ແລະ ຄ່າບໍລິການ ປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມມີການຊຳລະສະສາງທຸລະກິດ, ຄ່າທຳນຽມເກີດຈາກການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ, ຄ່າທຳນຽມການອອກໜັງສືຄ້ຳປະກັນການເງິນ).

ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບ ໂດຍອີງຕາມພື້ນຖານການບັນຊີເງິນສົດ.

***2.6. ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດ ລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸບໍ່ເກີນ 30 ວັນ.

***2.7. ຊັບສົມບັດຄົງທີ່***

ຊັບສົມບັດຄົງທີ່ລວມມີຊັບສົມບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ ແລະ ສິດນຳໃຊ້ທີ່ດິນ, ຊັບສົມບັດຄົງທີ່ມີຕົວຕົນປະກອບມີ ອາຄານ, ເຄື່ອງເຟີນີເຈີ້ ແລະ ເຄື່ອງຕົບແຕ່ງ, ເຄື່ອງໃຊ້ຫ້ອງການ, ພາຫານະ, ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີ ໂປແກຼມຄອມພິວເຕີ.

ຊັບສົມບັດຄົງທີ່ໄດ້ຖືກລາຍງານດ້ວຍຕົ້ນທຶນ ລົບ ໃຫ້ຄ່າຫລຸ້ຍຫ້ຽນສະສົມ (ຖ້າມີ).

ຕົ້ນທຶນຂອງຊັບສົມປະກອບດ້ວຍມູນຄ່າຊື້ ບວກ ກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສົມຢູ່ໃນສະພາບທີ່ພ້ອມໃຊ້ງານ.

ຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

ເມື່ອຊັບສົມບັດຖືກຂາຍ ຫລື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບສະຫລຸບຊັບສົມບັດ ແລະ ກຳໄລ ຫລື ຂາດທຶນທີ່ມາຈາກການຂາຍອອກ ຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

## 2. **ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.8. ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສົມບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ ທີ່ຄາດຄະເນຂອງຊັບສົມບັດເຫລົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ອອກໂດຍກະຊວງການເງິນ ວັນທີ 1 ມີນາ 2011. ອັດຕາໃຊ້ປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນຄອມພິວເຕີ ແລະ ຊອບແວ | 20% |

### *2.9. ການເຄື່ອນໄຫວເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ, ຊັບສິນ ແລະ ໜີ້ສິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບສະຫລຸບຊັບສົມບັດ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນວັນທີ 31 ທັນວາ 2011 ໄດ້ສະແດງຢູ່ຂ້າງລຸ່ມນີ້). ລາຍຮັບ ແລະ ລາຍຈ່າຍເກີດຈາກການ ແລກປ່ຽນເງິນຕາຕ່າງປະເທດສຳລັບໄລຍະຕັ້ງແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011 ແມ່ນ ຖືກປ່ຽນເປັນເງິນກີບດ້ວຍອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ. ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນໃນມື້ສ້າງໃບສະຫລຸບຊັບສົມບັດແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

| | *31 ທັນວາ 2011* |
|---|---|
| | *ກີບ* |
| ໂດລາ ສະຫະລັດ (“ໂດລາ”) | 8,007 |
| ບາດໄທ (“ບາດ”) | 251.75 |
| ຢວນ ຈີນ (“ຢວນ”) | 1,233 |

### *2.10. ອາກອນ*

ການຄິດໄລ່ອາກອນຕ້ອງຈ່າຍ ແມ່ນຖືກສ້າງຂຶ້ນສຳລັບການເກັບອາກອນຈາກກຳໄລປະຈຳປີ ໂດຍອີງຕາມກົດໝາຍສ່ວຍສາອາກອນ ວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ໃນແຕ່ລະປີທີ່ມີກຳໄລ, ສາຂາມີພັນທະຕ້ອງຈ່າຍອາກອນ ໃນອັດຕາ 35% ຂອງກຳໄລທັງໝົດກ່ອນຫັກອາກອນ ຫລື ອາກອນຕ່ຳສຸດ 1% ຂອງລາຍຮັບໃນກໍລະນີຂາດທຶນ. ອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນບົດລາຍງານການເງິນອາດຈະມີການປ່ຽນແປງ ຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.11. ຜົນປະໂຫຍດຂອງພະນັກງານ.*

*ຜົນປະໂຫຍດພາຍຫລັງອອກການ*

ຜົນປະໂຫຍດພາຍຫລັງອອກການແມ່ນຈະຖືກຈ່າຍໃຫ້ພະນັກງານບຳນານຂອງສາຂາໂດຍກົມກອງທຶນສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາ ຕ້ອງໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດຂອງພະນັກງານຫລັງອອກການ ໂດຍການຈ່າຍຄ່າເບ້ຍປະກັນສັງຄົມໃຫ້ແກ່ຕົວແທນປະກັນ ສັງຄົມໃນອັດຕາ 5.00% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ, ສາຂາບໍ່ມີພັນທະອື່ນອີກທີ່ກ່ຽວຂ້ອງກັບຜົນປະໂຫຍດຫລັງອອກການຂອງພະນັກງານ.

*ຜົນປະໂຫຍດຈາກການຍົກເລີກສັນຍາ*

ສາຂາມີພັນທະ, ພາຍໃຕ້ກົດໝາຍແຮງງານໂດຍທົ່ວໄປ, ແມ່ນຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກຍົກເລີກສັນຍາ ຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດຄວາມຊຳນານໃນວິຊາສະເພາະ ຫລື ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ;
- ເມື່ອສາຂາຫາກໄດ້ພິຈາລານາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງ ເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານ 10% ຂອງເງິນເດືອນພື້ນຖານເດືອນສຸດທ້າຍຄູນໃຫ້ກ່ອນຈຳນວນເດືອນເຮັດວຽກນຳສາຂາສຳລັບ ຜູ້ທີ່ເຮັດວຽກຕ່ຳກວ່າ 3 ປີ. ສຳລັບຜູ້ທີ່ເຮັດວຽກເກີນ 3 ປີ ພື້ນຖານຄິດໄລ່ແມ່ນ 15% ຂອງເງິນເດືອນສຸດທ້າຍຄູນໃຫ້ຈຳນວນເດືອນເຮັດວຽກນຳສາຂາ. ນະວັນທີ 31 ທັນວາ 2011, ບໍ່ມີພະນັກງານຂອງສາຂາຖືກຍົກເລີກສັນຍາ ເນື່ອງມາຈາກເຫດຜົນທີ່ກ່າວໄວ້ຂ້າງເທິງ; ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ສ້າງຄັງແຮສຳລັບເງິນຊົດເຊີຍຈາກການຍົກເລີກສັນຍາ ໃນບົດລາຍງານການເງິນ.

## 3. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ

| | *ສຳລັບໄລຍະແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011* |
|---|---|
| | *ກີບ* |
| **ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ:** | |
| ລາຍຮັບດອກເບ້ຍຈາກເງິນຝາກຢູ່ທະນາຄານອື່ນ | 17,523,457 |
| | **17,523,457** |
| **ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ:** | |
| ລາຍຈ່າຍດອກເບ້ຍຈາກເງິນຝາກຂອງລູກຄ້າ | (5,009,374) |
| | **(5,009,374)** |
| **ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ** | **12,514,083** |

## 4. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ

| | *ສຳລັບໄລຍະແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011* |
|---|---|
| | *ກີບ* |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ** | |
| ຄ່າທຳນຽມກ່ຽວກັບການໃຫ້ບໍລິການລູກຄ້າ | 8,877,223 |
| | **8,877,223** |

## 5. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

| | *ສຳລັບໄລຍະແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011* |
|---|---|
| | *ກີບ* |
| ຄ່າແຮງງານ ແລະ ເງິນເດືອນ | 688,780,184 |
| | **688,780,184** |

## 6. ລາຍຈ່າຍບໍລິຫານອື່ນໆ

| | *ສຳລັບໄລຍະແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011* |
|---|---|
| | *ກີບ* |
| ຄ່າເຊົ່າຫ້ອງການ | 869,158,333 |
| ຄ່ານ້ຳມັນ | 24,140,611 |
| ຄ່າເຄື່ອງໃຊ້ຫ້ອງການ | 126,062,600 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 258,348,860 |
| ຄ່າໂທລະຄົມມະນາຄົມ | 116,728,179 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 29,139,536 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 30,380,052 |
| ຄ່າທຳນຽມປະກັນໄພ | 7,024,084 |
| ຄ່າຮັບແຂກ | 218,089,332 |
| ລາຍຈ່າຍອື່ນໆ | 133,064,080 |
| | **1,812,135,667** |

## 7. ເງິນສົດໃນກຳມື

| | *31 ທັນວາ 2011* |
|---|---|
| | *ກີບ* |
| ເງິນສົດໃນກຳມືເປັນກີບ | 533,815,500 |
| ເງິນສົດໃນກຳມືເປັນເງິນຕາຕ່າງປະເທດ | 5,982,927,484 |
| | **6,516,742,984** |

## 8. ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“BOL”)

| | *31 ທັນວາ 2011* |
|---|---|
| | *ກີບ* |
| ເງິນຝາກກະແສລາຍວັນ | 90,412,995,215 |
| ເງິນຄ້ຳປະກັນທຶນຈົດທະບຽນ | 59,403,219,883 |
| | **149,816,215,098** |

## 8. ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("BOL") (ຕໍ່)

ເງິນຝາກກັບທະນາຄານແຫ່ງ ສປປ ລາວ ລວມມີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກພາກບັງຄັບ, ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ສາຂາ ໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບ, ເຊິ່ງຖືກຄິດໄລ່ ໃນອັດຕາ 5.00% ແລະ 10.00% ໃນທຸກໆ 2 ຄັ້ງຕໍ່ເດືອນ (2011:5.00% ແລະ 10.00%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດ ຕໍ່າກວ່າ 12 ເດືອນພາຍຫລັງການຫັກຍອດເງິນຂອງເງິນສົດໃນກຳມືທີ່ເປັນສະກຸນເງິນກີບ, ໂດລາ ແລະ ໄທບາດຕາມລຳດັບ.

ໃນປີ 2011, ສາຂາໄດ້ຮັກສາເງິນຝາກພາກບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

## 9. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | *31 ທັນວາ 2011*<br>*ກີບ* |
|---|---|
| **ເງິນຝາກກັບທະນາຄານຕ່າງປະເທດ** | |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ, ເອເຊຍ ຈຳກັດ ຮົງກົງ | 37,656,090,210 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ, ສຳນັກງານໃຫຍ່ | 128,811,788,420 |
| | **166,467,878,629** |

## 10. ຊັບສິນບັດຄົງທີ່

### *ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຍອດເຫລືອຂອງຊັບສິນບັດຄົງທີ່ມີຕົວຕົນສຳລັບທ້າຍປີ ແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011 ມີດັ່ງລຸ່ມນີ້:

| | *ເຄື່ອງໃຊ້ຫ້ອງການ* | *ເຟີນີເຈີ & ຕົບແຕ່ງ* | *ອຸປະກອນ ຄອມພີວເຕີ ແລະ ຊອບແວ* | *ລວມ* |
|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ:** | | | | |
| ນະວັນທີ 25 ສິງຫາ 2011 | - | - | - | - |
| ຮັບເຂົ້າເພີ່ມ | 41,896,000 | 10,361,077,500 | 1,728,389,207 | 12,131,362,707 |
| ວັນທີ 31 ທັນວາ 2011 | 41,896,000 | 10.361,077,500 | 1,728,389,207 | 12,131,362,707 |
| **ຫລຸ້ຍຫ້ຽນສະສົມ:** | | | | |
| ນະວັນທີ 25 ສິງຫາ 2011 | - | - | - | - |
| ຄ່າຫລຸ້ຍຫ້ຽນພາຍໃນປີ 2011 | 46,551 | 94,976,544 | 8,641,946 | 103,665,041 |
| ວັນທີ 31 ທັນວາ 2011 | 46,551 | 94,976,544 | 8,641,946 | 103,665,041 |
| **ມູນຄ່າສຸດທິ:** | | | | |
| ວັນທີ 1 ມັງກອນ 2011 | - | - | - | - |
| ວັນທີ 31 ທັນວາ 2011 | 41,849,449 | 10,266,100,956 | 1,719,747,261 | 12,027,697,666 |

## 10. ຊັບສິນບັດຄົງທີ່ (ຕໍ່)

***ຊັບສິນບັດຄົງທີ່ບໍ່ມີຕົວຕົນ***

| | *ລວມທັງໝົດ* |
|---|---|
| | *ກີບ* |
| **ຕົ້ນທຶນ:** | |
| ນະວັນທີ 25 ສິງຫາ 2011 | - |
| ຮັບເຂົ້າໃນປີ | 44,607,880 |
| ວັນທີ 31 ທັນວາ 2011 | 44,607,880 |
| **ຄ່າເສື່ອມສະສົມ:** | |
| ນະວັນທີ 25 ສິງຫາ 2011 | - |
| ຄ່າເສື່ອມພາຍໃນປີ 2011 | 223,039 |
| ວັນທີ 31 ທັນວາ 2011 | 223,039 |
| **ມູນຄ່າສຸດທິ:** | |
| ວັນທີ 1 ມັງກອນ 2011 | - |
| ວັນທີ 31 ທັນວາ 2011 | 44,384,841 |

## 11. ຊັບສິນອື່ນໆ

| | *31 ທັນວາ 2011* |
|---|---|
| | *ກີບ* |
| ຈ່າຍລວງໜ້າຄ່າເຊົ່າອາຄານ | 11,165,341,667 |
| ຈ່າຍລວງໜ້າຄ່າບໍລິການອິນເຕີເນັດ ສາຍເຊົ່າ | 167,841,667 |
| | **11,333,183,334** |

## 12. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ຍອດເຫລືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2011 ມີດັ່ງນີ້:

| | *31 ທັນວາ 2011*<br>*ກີບ* |
|---|---|
| **ເງິນຝາກກະແສລາວັນ** | **27,660,689,759** |
| ເປັນເງິນກີບ | 25,000,000 |
| ເປັນເງິນຕາຕ່າງປະເທດ | 27,635,689,759 |
| **ເງິນຝາກປະຢັດ** | **9,124,706,045** |
| ເປັນເງິນກີບ | 868,577,650 |
| ເປັນເງິນຕາຕ່າງປະເທດ | 8,256,128,395 |
| **ເງິນຝາກມີກຳນົດ** | **845,464,200** |
| ເປັນເງິນກີບ | 200,100,000 |
| ເປັນເງິນຕາຕ່າງປະເທດ | 645,364,200 |
| **ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ** | **70,286,040,005** |
| ເປັນເງິນກີບ | - |
| ເປັນເງິນຕາຕ່າງປະເທດ | 70,286,040,005 |
| | **107,916,900,009** |

ອັດຕາດອກເບ້ຍເງິນຝາກລູກຄ້າ ມີດັ່ງນີ້:

| | *2011*<br>*ອັດຕາດອກເບ້ຍ* |
|---|---|
| ເງິນຝາກກະແສລາຍວັນເປັນເງິນກີບ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດ ເປັນເງິນກີບ | 1.00% - 3.00% |
| ເງິນຝາກປະຢັດ ເປັນເງິນໂດລາ | 0.25% - 1.25% |
| ເງິນຝາກປະຢັດ ເປັນເງິນບາດ | 0.25% - 1.00% |
| ເງິນຝາກມີກຳນົດ ເປັນເງິນກີບ | 5% - 12% |
| ເງິນຝາກມີກຳນົດ ເປັນເງິນຕາຕ່າງປະເທດ | 0.50% - 6.25% |

## 13. ໜີ້ຕ້ອງສົ່ງອື່ນໆ

| | *31 ທັນວາ 2011*<br>*ກີບ* |
|---|---|
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 480,420,000 |
| ລາຍຮັບຮັບລ່ວງໜ້າ | 686,160,666 |
| | **1,166,580,666** |

## 14. ອາກອນ

ໂດຍອີງຕາມກົດໝາຍອາກອນລາວ ສະບັບວັນທີ 14 ຕຸລາ 1995 ອອກໂດຍ ປະທານສະພາແຫ່ງຊາດ, ແລະ ຂໍ້ຕົກລົງເລກທີ 553/TO ລົງວັນທີ 27 ມິຖຸນາ 1997 ອອກໂດຍກົມສ່ວຍສາອາກອນ, ອາກອນກຳໄລຕ້ອງຈ່າຍແມ່ນເອົາອາກອນທີ່ສູງກວ່າ ລະຫວ່າງອາກອ່ນຕ່ຳສຸດ 1% ຂອງລາຍຮັບທັງໝົດ ຫລື 35% ຂອງອາກອນກຳໄລຕາມບົດລາຍງານ ຂອງສາຂາ ພາຍໃຕ້ລະບົບບັນຊີລາວ.

ໃນໄລຍະຕັ້ງແຕ່ວັນທີ 25 ສິງຫາ 2011 ຫາວັນທີ 31 ທັນວາ 2011, ສາຂາຂາດທຶນຈຳນວນ 2,874,598,622 ກີບ, ສາຂາຕ້ອງໄດ້ເສຍອາກອນຕ່ຳສຸດ 1% ຂອງລາຍຮັບທັງໝົດ. ລາຍລະອຽດຂອງການຄິດໄລ່ອາກອນຂອງສາຂາສຳລັບປີປັດຈຸບັດ ແລະ ປີຜ່ານມາມີດັ່ງນີ້:

**14. ອາກອນ (ຕໍ່)**

| | *ສຳລັບໄລຍະແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011 ກີບ* |
|---|---:|
| **ທາງເລືອກ 1** | |
| ຍອດລວມລາຍຮັບທີ່ຕ້ອງເສຍອາກອນ | 142,347,795 |
| **ອາກອນລາຍຮັບ 1% ຂອງລາຍຮັບທີ່ຕ້ອງເສຍອາກອນ** | **1,423,478** |
| **ທາງເລືອກ 2** | |
| ກຳໄລກ່ອນເສຍອາກອນພາຍໃນປີ | (2,874,598,622) |
| ຍົກຍອດຂາດທຶນຈາກປີຜ່ານມາ | - |
| *ກຳໄລສຸດທິພາຍໃນປີກ່ອນເສຍອາກອນ ກ່ອນຍົກຍອດຂາດທຶນຈາກປີຜ່ານມາ* | (2,874,598,622) |
| ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກອາກອນ | |
| ກຳໄລທີ່ຖືກອາກອນ | (2,874,598,622) |
| **ອາກອນລາຍຮັບ 35% ຂອງກຳໄລທີ່ຕ້ອງເສຍອາກອນ** | |
| **ອາກອນລາຍຮັບພາຍໃນປີ (ໂຕທີ່ສູງກວ່າ ລະຫວ່າງ ທາງເລື່ອກທີ່ 1 ແລະ 2)** | **1,423,478** |
| ອາກອນຕ້ອງຈ່າຍໃນຕົ້ນປີ | - |
| ອາກ່ອນທີ່ຈ່າຍພາຍໃນປີ | - |
| **ອາກອນທີ່ຕ້ອງຈ່າຍໃນທ້າຍປີ** | **1,423,478** |

ເຖິງຢ່າງໃສດກໍ່ຕາມ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນບົດລາຍງານການເງິນອາດຈະມີການປ່ຽນແປງ ຂຶ້ນກັບການຄິດໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ເອກະສານຊ້ອນທ້າຍບົດລາຍງານການເງິນ (ຕໍ່)
ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

## 15. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວພາຍໃນປີມີດັ່ງລຸ່ມນີ້:

| | *31 ທັນວາ 2011* |
|---|---|
| | *ກີບ* |
| ຍອດຍົກມາ | |
| ທຶນຈົດທະບຽນຖອກເພີ່ມພາຍໃນປີ | 239,970,000,000 |
| **ຍອດເຫລືອທ້າຍປີ** | **239,970,000,000** |

## 16. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31 ທັນວາ 2011* |
|---|---|
| | *ກີບ* |
| ເງິນສົດໃນກຳມື | 6,516,742,984 |
| ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ | 149,816,215,098 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 166,467,878,629 |
| | **322,800,836,711** |

## 17. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫລື ຫລາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫລື ພາຍໃຕ້ການຄວບຄຸມ, ໂດຍສາຂາ (ໃນນີ້ລວມມີ ບໍລິສັດແມ່, ສາຂາ ແລະ ສະມາຊິກຂອງສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫລື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຄະນະບໍລິຫານຫຼັກສາຂາ ຫລື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫລື (d);

ເອກະສານຊ້ອນທ້າຍບົດລາຍງານການເງິນ (ຕໍ່)
ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

**17. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

(e) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫລື ມີອິດທິພົນອັນໃຫຍ່ຫລວງ, ຫລື ມີສິດທິອຳນາດການໃນການອອກສຽງສ່ວນໃຫ່ຍຕໍ່ສາຂາທີ່ດຳເນີນທຸລະກິດຢູ່, (ໂດຍທາງ ກົງ ຫລື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (c) ຫລື (d); ຫລື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫລັງອອກວຽກຂອງພະນັກງານຂອງສາຂາ, ຫລື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ຍອດເຫລືອພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ ມີດັ່ງນີ້:

| | *ໜີ້ຕ້ອງຮັບ* | *(ໜີ້ຕ້ອງສົ່ງ)* |
|---|---|---|
| | *ກີບ* | *ກີບ* |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ - ສຳນັກງານໃຫຍ່** | | |
| ເງິນຝາກກະແສລາຍວັນ | 37,656,090,210 | - |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ (ເອເຊຍ) ຈຳກັດ ຮົງກົງ** | | |
| ເງິນຝາກກະແສລາຍວັນ | 128,811,788,420 | - |

ລາຍການເຄື່ອນໄຫວທີ່ສຳຄັນຂອງພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງລຸ່ມນີ້:

| | *ລາຍການເຄື່ອນໄຫວ* | *ກີບ* |
|---|---|---|
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ - ສຳນັກງານໃຫຍ່ | ທຶນປະກອບ | 239,970,000,000 |
| | ລາຍຮັບດອກເບ້ຍ | 4,579,418 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ (ເອເຊຍ) ຈຳກັດ ຮົງກົງ | ລາຍຮັບດອກເບ້ຍ | 11,154,483 |

ເອກະສານຊ້ອນທ້າຍບົດລາຍງານການເງິນ (ຕໍ່)
ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ 2011 ຫາ 31 ທັນວາ 2011

**18. ເຫດການຫລັງມື້ປິດບັນຊີ**

ນອກຈາກຂໍ້ມູນທີ່ໄດ້ເປີດເຜີຍໃນບົດລາຍງານການເງິນ, ໃນມື້ທີ່ບົດລາຍງານການເງິນໄດ້ຖືກສ້າງຂຶ້ນ ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫລັງຈາກວັນທີ 31 ທັນວາ 2011 ທີ່ສົ່ງຜົນກະທົບຕໍ່ຖານະທາງການເງິນຂອງທະນາຄານ ໃນວັນທີ 31 ທັນວາ 2011

| | |
|---|---|
| ທ່ານ ລູ ຈຸ້ນ | ທ່ານ ຈ່າງ ຕ້າຊຸ້ງ |
| ຜູ້ອຳນວຍການ | ຫົວໜ້າພະແນກບັນຊີ |

ນະຄອນຫລວງວຽງຈັນ, ສປປ ລາວ

29 ມີນາ 2013